ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 098 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 17 NOV 2021

# ແຈ້ງເຊີນປະມູນ

**ເຖິງ:** ບັນດາທ່ານຫົວໜ້າ ບໍລິສັດ ຕິດຕັ້ງສ້ອມແປງ ແລະ ຈຳໜ່າຍອຸປະກອນໄອທີ ໃນ ສປປ ລາວ.

**ເລື່ອງ:** ແຈ້ງເຊີນປະມູນການຊື້ Power Module ແລະ ຈໍ LCD ໃສ່ APC Ups 30Kva

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເພື່ອເຂົ້າຮ່ວມປະມູນລາຄາ Power Module ແລະ ຈໍ LCD ໃສ່ APC Ups 30Kva ຂອງ ທຄຕລ ສາຂາ ນະຄອນຫຼວງ ລວມທັງໝົດ 2 ລາຍການ, ໂດຍມີລາຍລະອຽດ ດັ່ງລຸ່ມນີ້:

| No | Part | Description | Unit |
|---|---|---|---|
| 1 | WAP9215RM | APC Power View UPS Management Display Rack Mount-Spare Part | 1 Set |
| 2 | WSUVTPM30KH-P | NANNA POWER MODULE 30KVA 400V PARALLEL OPERATION-SPARE PART | 1 Set |
| 3 | INIBS | Replacement Service | 1Job |

**# ລາຍລະອຽດໜ້າວຽກມີດັ່ງນີ້:**

- ຜູ້ຂາຍຕ້ອງຮັບປະກັນອຸປະກອນຢ່າງໜ້ອຍ 12ເດືອນ ນັບແຕ່ມື້ເປີດນຳໃຊ້ UPS.
- ອາໄຫລ່ ທີ່ລະບຸຂ້າງເທິງຕ້ອງຜະລິດມາຈາກຍີ່ຫໍ້ APC ເທົ່ານັ້ນ.
- ບໍລິສັດຜູ້ຂາຍອາໄຫ່ລ ຕ້ອງມີຄວາມສຳນານໃນການຕິດຕັ້ງ, ເຊັດຄ່າ ແລະ ອັບເດດໂປແກຼມ ໃຫ້ຕິດຕາມໂຫຼດໄດ້ເປັນປົກກະຕິ.
- ຫລັງຈາກປ່ຽນ Power Module ແລ້ວ ຕ້ອງແທກຄ່າ Battery ທັງໝົດ 16 ແຟັກ ພ້ອມ
- ພ້ອມກວດເຊັກການທຳງານຍ້ອນຫລັງ UPS (Run time and checking Even log).
- ຫລັງຈາກປ່ຽນຖ່າຍອາໄຫ່ລແລ້ວ ຕ້ອງຮັບປະກັນເຄື່ອງໃຫ້ເຮັດວຽກຈ່າຍໄຟອອກໄດ້ ເປັນປົກກະຕິ ພ້ອມຮັບປະກັນ 12 ເດືອນ.

▪ <u>ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານດັ່ງນີ້:</u>

❖ **ເອກະສານຊອງທີ່ 1 ( ບໍ່ປິດຊອງ)**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງໄອທີ ແລະ ເຄື່ອງໄຟຟ້າ, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ), ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີລ່າສຸດ (ປີ 2020).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ ຫຼື ມີເອກະສານກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງ ໃຫ້ພາກສ່ວນອື່ນ.

3. ກໍານົດຍື່ນຊອງມາດຕະຖານເຕັກນິກ ກ່ອນວັນພຸດ, ວັນທີ 08/12/2021 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ **C.**

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>**

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນພະຫັດ ວັນທີ **16/12/2021** ເວລາ: 9:30ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນໃຫ້ບໍລິສັດ, ຮ້ານຕົວແທນຈໍາໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ3 ຕຶກ C.
3. ບໍລິສັດຜູ້ສະໜອງຕ້ອງກໍານົດລຸ້ນຕ່າງໆ ພ້ອມທັງລະບຸເງື່ອນໄຂ ມາໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ໂດຍອອກໜັງສືຄໍ້າປະກັນທີ່ອອກ ໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 16/01/2022)** ຫຼື ແຊັກວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫລັງປະກາດຜົນ ແລະ ດໍາເນີນສັນຍາສໍາເລັດ ທຄຕລ ຈະສົ່ງຄືນໜັງສືຄໍ້າປະກັນດັ່ງກ່າວ.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

❖ ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ຜູ້ທີ່ຊະນະການປະມູນ ແມ່ນບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ ແຕ່ຈະວັດຈາກປະສົບການ ແລະ ແກ້ໄຂບັນຫາຕ່າງໆໄດ້ ໃນເມື່ອ UPS ມີບັນຫາ ທາງກາງເວັນ ແລະ ກາງຄືນ, ຄວາມຊໍານານງານພ້ອມ.

ການຊໍາລະແມ່ນຈ່າຍງວດດຽວ 100% ພາຍໃນ 30 ວັນ ຫລັງຈາກການຕິດຕັ້ງສໍາເລັດ, ນໍາໃຊ້ໄດ້ ແລະ ພ້ອມເຮັດລາຍງານຢັ້ງຢືນມາໃຫ້ວິຊາການຜູ້ຄຸ້ມຄອງ UPS ທຄຕລ ຮັບຊາບ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**<u>ຜູ້ອໍານວຍການ</u>**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຄໍາພຸດ ສິດທິລາດ

**ສອບຖາມລາຍລະອຽດເພີ່ມເຕີມ**

ຕິດຕໍ່ສອບຖາມ: ທ່ານ ຂັນຕີ ເປີໄທ 020 9811 3597.

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: